ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ491 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 09 ກັນຍາ 2021

# ຂໍ້ຕົກລົງວ່າດ້ວຍ
# ມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 16 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊຳລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີ ຂອງກົມຄຸ້ມຄອງລະບົບຊຳລະສະສາງ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ ຢູ່ ສປປ ລາວ ທີ່ບໍ່ຮ່ວມກັບເຄືອຂ່າຍບັດສາກົນ ນຳໃຊ້ຄຸ້ມຄອງ, ຕິດຕາມ ກວດກາ ການອອກລະຫັດທະນາຄານ ຂອງຜູ້ອອກບັດຊຳລະ ໃຫ້ເປັນລະບົບລວມສູນ ແນໃສ່ເຮັດໃຫ້ການອອກບັດຊຳລະ ມີຄວາມເປັນລະບຽບ ຮຽບຮ້ອຍ, ມີປະສິດທິພາບ ແລະ ສາມາດຈຳແນກປະເພດບັດຊຳລະ ຮັບປະກັນການເຊື່ອມໃຊ້ຮ່ວມກັນທັງພາຍໃນ, ພາກພື້ນ ແລະ ສາກົນ.

### ມາດຕາ 2 ມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ

ມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ ແມ່ນການກຳນົດກຸ່ມຕົວເລກ ຈຳນວນ ແປດ ຕົວເລກທຳອິດ ຂອງເລກບັດຊຳລະ ຊຶ່ງກຳນົດ ປະເທດ, ຜູ້ອອກ ແລະ ປະເພດ ບັດຊຳລະ ທີ່ສອດຄ່ອງຕາມມາດຕະຖານສາກົນ (ISO/IEC 7812) ແລະ ການກຳນົດຂອງກົມຄຸ້ມຄອງລະບົບຊຳລະສະສາງ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເລກບັດຊຳລະ (Primary Account Number = PAN)** ໝາຍເຖິງ ຕົວເລກທີ່ຢູ່ດ້ານໜ້າທັງໝົດຂອງບັດຊຳລະປະເພດຕ່າງໆ ທີ່ມີຄວາມຍາວ ລະຫວ່າງ ສິບຫົກ ຫາ ສິບເກົ້າ ຕົວເລກ. ເລກບັດຊຳລະ ປະກອບດ້ວຍ ມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ, ລະຫັດຜູ້ຖືບັດຊຳລະ ແລະ ລະຫັດກວດສອບຄວາມຖືກຕ້ອງຂອງຂໍ້ມູນ ຕາມລຳດັບ;

2. **ລະຫັດຜູ້ຖືບັດຊຳລະ (Customer Number)** ໝາຍເຖິງ ກຸ່ມຕົວເລກ ຈຳນວນ ເຈັດ ຫາ ສິບ ຕົວເລກທີ່ຖັດຈາກມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ ເປັນກຸ່ມຕົວເລກທີ່ກຳນົດຕົວຕົນຂອງຜູ້ຖືບັດຊຳລະ ທີ່ອອກໂດຍຜູ້ອອກບັດຊຳລະ;

3. **ລະຫັດກວດສອບຄວາມຖືກຕ້ອງຂອງຂໍ້ມູນ (Check Digit)** ໝາຍເຖິງ ຕົວເລກສຸດທ້າຍຖັດຈາກລະຫັດຜູ້ຖືບັດຊຳລະ ເປັນຕົວເລກທີ່ກວດສອບຄວາມຖືກຕ້ອງຂອງຂໍ້ມູນ ທີ່ອອກໂດຍຜູ້ອອກບັດຊຳລະ;

4. **ຜູ້ອອກບັດຊຳລະ (Card Issuer)** ໝາຍເຖິງ ຜູ້ໃຫ້ບໍລິການບັດຊຳລະ ທີ່ອອກບັດຊຳລະ ໃຫ້ແກ່ຜູ້ຖືບັດຊຳລະ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊຳລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຜູ້ອອກບັດຊຳລະ ຢູ່ ສປປ ລາວ ທີ່ບໍ່ຮ່ວມກັບເຄືອຂ່າຍບັດສາກົນ, ຜູ້ຄວບຄຸມລະບົບຍ່ອຍ ແລະ ຜູ້ເຂົ້າຮ່ວມອື່ນ ທີ່ກ່ຽວຂ້ອງກັບການໃຫ້ບໍລິການບັດຊຳລະ.

## ໝວດທີ 2
## ເນື້ອໃນຂອງມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ

ມາດຕາ 5 ເນື້ອໃນຂອງມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ

ເນື້ອໃນຂອງມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ ແມ່ນການກຳນົດຕົວເລກ ແລະ ຄ່າຕົວອັກສອນແທນຄວາມໝາຍຂອງກຸ່ມຈຳນວນ ແປດ ຕົວເລກທຳອິດຂອງເລກບັດຊຳລະ ໂດຍຈັດລຽງລຳດັບຕາມຮູບແບບ 9418YYZZ ຊຶ່ງເນື້ອໃນຂອງແຕ່ລະຕົວເລກ ແລະ ຄ່າຕົວອັກສອນ ມີການຈັດລຽງຕາມມາດຕະຖານ ດັ່ງນີ້:

1. 9 ແມ່ນຕົວເລກລະຫັດ ທີ່ສະແດງເຖິງການຮອງຮັບບັດຊຳລະຂອງບັນດາປະເທດຕ່າງໆ ເພື່ອປັບໃຊ້ຕາມລະບົບການຊຳລະພາຍໃນ ຕາມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ - ຕົວເລກລະຫັດ ທີ່ກຳນົດອຸດສາຫະກຳຂອງຜູ້ອອກບັດຊຳລະ (Major Industry Identifier = MII) ຕາມມາດຕະຖານ (ISO/IEC 7812);

2. 418 ແມ່ນຕົວເລກລະຫັດ ທີ່ກຳນົດປະເທດ ຂອງ ສປປ ລາວ ຕາມມາດຕະຖານ ISO 3166-1;

3. ຄ່າຕົວອັກສອນ (YY) ແມ່ນລະຫັດຜູ້ອອກບັດຊຳລະ;

4. ຄ່າຕົວອັກສອນ (ZZ) ແມ່ນລະຫັດປະເພດບັດຊຳລະ.

**ມາດຕາ 6 ລະຫັດຜູ້ອອກບັດຊຳລະ**

ລະຫັດຜູ້ອອກບັດຊຳລະ ແມ່ນຕົວເລກລະຫັດ ແຕ່ 00 ຫາ 99 ທີ່ຢູ່ລຳດັບທີ ຫ້າ ແລະ ຫົກ ໃນມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ.

ຜູ້ອອກບັດຊຳລະ ຕ້ອງຂໍອະນຸຍາດນຳໃຊ້ລະຫັດຜູ້ອອກບັດຊຳລະຂອງຕົນ ຈາກກົມຄຸ້ມຄອງລະບົບຊຳລະສະສາງ ຢ່າງເປັນລາຍລັກອັກສອນ. ກົມຄຸ້ມຄອງລະບົບຊຳລະສະສາງ ຕ້ອງພິຈາລະນາອອກລະຫັດຜູ້ອອກບັດຊຳລະພາຍໃນ ຫ້າ ວັນລັດຖະການ.

**ມາດຕາ 7 ລະຫັດປະເພດບັດຊຳລະ**

ລະຫັດປະເພດບັດຊຳລະ ແມ່ນຕົວເລກລະຫັດ ແຕ່ 00 ຫາ 99 ທີ່ຢູ່ລຳດັບທີ ເຈັດ ແລະ ແປດ ໃນມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ ຊຶ່ງຕົວເລກລະຫັດ ກຳນົດປະເພດບັດຊຳລະ ດັ່ງນີ້:

1. ລະຫັດ 00 ສຳລັບບັດຝາກ-ຖອນເງິນສົດ (ATM-Only Card);
2. ລະຫັດ 01 ສຳລັບບັດເງິນຝາກ (Debit Card);
3. ລະຫັດ 02 ສຳລັບບັດສິນເຊື່ອ (Credit Card);
4. ລະຫັດ 03 ສຳລັບບັດຊຳລະແບບຕື່ມເງິນ (Prepaid Card).

ກົມຄຸ້ມຄອງລະບົບຊຳລະສະສາງ ເປັນຜູ້ກຳນົດລະຫັດປະເພດບັດຊຳລະອື່ນ ຕາມການສະເໜີຂອງຜູ້ອອກບັດຊຳລະ ຫຼື ສະພາບການໃຫ້ບໍລິການບັດຊຳລະຕົວຈິງ ໃນແຕ່ລະໄລຍະ.

## ໝວດທີ 3
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 8 ຂໍ້ຫ້າມ**

ຫ້າມຜູ້ອອກບັດຊຳລະ ຢູ່ ສປປ ລາວ ທີ່ບໍ່ຮ່ວມກັບເຄືອຂ່າຍບັດສາກົນ, ຜູ້ຄວບຄຸມລະບົບຍ່ອຍ ແລະ ຜູ້ເຂົ້າຮ່ວມອື່ນ ທີ່ກ່ຽວຂ້ອງກັບການໃຫ້ບໍລິການບັດຊຳລະ ມີພຶດຕິກຳ ດັ່ງນີ້:

1. ກຳນົດລະຫັດຜູ້ອອກບັດຊຳລະ ໂດຍບໍ່ໄດ້ຮັບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້;

2. ກຳນົດລະຫັດປະເພດບັດຊຳລະ ບໍ່ສອດຄ່ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;

3. ນຳໃຊ້ມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ ໂດຍບໍ່ໄດ້ຮັບອະນຸຍາດ ຈາກກົມຄຸ້ມຄອງລະບົບຊຳລະສະສາງ;

4. ຮັບສະມາຊິກທີ່ບໍ່ນໍາໃຊ້ມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊໍາລະ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ ເຂົ້າຮ່ວມນໍາໃຊ້ລະບົບເຄືອຂ່າຍບັດຊໍາລະ;

5. ນໍາໃຊ້ລະຫັດຜູ້ອອກບັດຊໍາລະ ຂອງຜູ້ອອກບັດຊໍາລະໃດໜຶ່ງ ເພື່ອປອມແປງອອກເປັນຜະລິດຕະພັນບັດຊໍາລະຂອງຕົນ.

**ມາດຕາ 9 ມາດຕະການຕໍ່ຜູ້ລະເມີດ**

ຜູ້ອອກບັດຊໍາລະ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການອອກບັດຊໍາລະ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ຮັບຜິດຊອບທາງແພ່ງ ຫຼື ດໍາເນີນຄະດີຕາມກົດໝາຍ ແລະ ຍົກເລີກການເປັນຜູ້ໃຫ້ບໍລິການບັດຊໍາລະໃນ ສປປ ລາວ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຊໍາລະ ສະບັບເລກທີ 288/ທຫລ, ລົງວັນທີ 17 ມີນາ 2020.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 10 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງລະບົບຊໍາລະສະສາງ ເປັນຜູ້ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ຜູ້ອອກບັດຊໍາລະ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຜູ້ອອກບັດຊໍາລະ ທີ່ອອກເລກບັດຊໍາລະ ໃຫ້ແກ່ຜູ້ຖືບັດຊໍາລະຂອງຕົນ ກ່ອນຂໍ້ຕົກລົງສະບັບນີ້ມີຜົນສັກສິດ ຕ້ອງເລີ່ມປ່ຽນຖ່າຍເລກບັດຊໍາລະທັງໝົດ ໃຫ້ສອດຄ່ອງຕາມຂໍ້ຕົກລົງສະບັບນີ້ ຊ້າສຸດກ່ອນວັນທີ 01 ມັງກອນ 2025.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ.ລ ຜູ້ວ່າການ



**ສອນໄຊ ສິດພະໄຊ**

ເອກະສານຊ້ອນທ້າຍ : ຕົວເລກລະຫັດ ທີ່ກຳນົດອຸດສາຫະກຳຂອງຜູ້ອອກບັດຊຳລະ (Major Industry Identifier = MII) ຕາມມາດຕະຖານ (ISO/IEC 7812)

ຕົວເລກລະຫັດ ທີ່ກຳນົດອຸດສາຫະກຳຂອງຜູ້ອອກບັດຊຳລະ (Major Industry Identifier = MII) ໝາຍເຖິງຕົວເລກລະຫັດ ແຕ່ 0 ຫາ 9 ທີ່ຢູ່ລຳດັບທຳອິດ ໃນມາດຕະຖານລະຫັດທະນາຄານ ຂອງຜູ້ອອກບັດຊຳລະ ທີ່ບົ່ງບອກປະເພດອຸດສາຫະກຳຂອງຜູ້ອອກບັດຊຳລະ ເພື່ອຮອງຮັບການໃຫ້ບໍລິການອອກບັດຊຳລະຂອງບັນດາເຄືອຂ່າຍບັດສາກົນ ແລະ ບັນດາປະເທດຕ່າງໆ. ຕົວເລກລະຫັດດັ່ງກ່າວ ແມ່ນມີບົດບາດສຳຄັນໃນການກຳນົດແຫຼ່ງທີ່ມາ ແລະ ການປະມວນຜົນ ຊຶ່ງອົງການສາກົນ (ISO) ໄດ້ກຳນົດຕົວເລກລະຫັດດັ່ງກ່າວ ຕາມມາດຕະຖານສາກົນ (ISO/IEC 7812) ຊຶ່ງລາຍລະອຽດມີ ດັ່ງລຸ່ມນີ້:

| ຕົວເລກລະຫັດ MII | ຄຳອະທິບາຍ |
|---|---|
| 0 | ຮອງຮັບໃຫ້ແກ່ຄະນະກຳມະການດ້ານເຕັກນິກທີ່ສ້າງຕັ້ງຂຶ້ນພາຍໃນອົງການສາກົນ (ISO) ຊຶ່ງສຳນັກງານຕັ້ງຢູ່ທີ່ ເມືອງເຈນີວາ ປະເທດສະວິດເຊີແລນ ໂດຍມີໜ້າທີ່ໃນການພັດທະນາ ແລະ ຮັກສາມາດຕະຖານສາກົນ ຊຶ່ງກວມເອົາຂົງເຂດຂະແໜງການທະນາຄານ, ຫຼັກຊັບ, ການບໍລິການດ້ານການເງິນ ແລະ ອື່ນໆ. |
| 1 | ຮອງຮັບບັດຊຳລະຂອງຂະແໜງອຸດສາຫະກຳການບິນ (Airline cards). |
| 2 | ຮອງຮັບບັດຊຳລະຂອງຂະແໜງອຸດສາຫະກຳການບິນ ແລະ ອຸດສາຫະກຳບັດຊຳລະອື່ນໆ ໃນອະນາຄົດ (Airline cards and other future industry assignments). |
| 3 | ຮອງຮັບບັດຊຳລະຂອງຂະແໜງອຸດສາຫະກຳການທ່ອງທ່ຽວ ແລະ ການບັນເທີງ ພ້ອມທັງ ບັດຊຳລະຂອງ ນິຕິບຸກຄົນຕ່າງໆ ຄື: ບໍລິສັດ American Express, JCB, Diner's Club, and Carte Blanche ( Travel and entertainment cards as well as non-banks like American Express, JCB, Diner's Club, and Carte Blanche). |
| 4 | ຮອງຮັບບັດຊຳລະຂອງຂະແໜງການທະນາຄານ-ການເງິນ ຄື: ເຄືອຂ່າຍບັດ Visa ແລະ Electron (Banking and financial cards such as Visa and Electron). |
| 5 | ຮອງຮັບບັດຊຳລະຂອງຂະແໜງການທະນາຄານ-ການເງິນ ຄື: ເຄືອຂ່າຍບັດ Mastercard (Banking and financial cards such as Mastercard). |
| 6 | ຮອງຮັບບັດຊຳລະຂອງຂະແໜງການທະນາຄານ ແລະ ການຄ້າ ຄື: ບໍລິສັດ Discover Card and China UnionPay (Merchandising and banking card such as Discover card and China UnionPay). |
| 7 | ຮອງຮັບບັດຊຳລະຂອງຂະແໜງອຸດສາຫະກຳນ້ຳມັນເຊື້ອໄຟ ແລະ ອຸດສາຫະກຳອື່ນໆ (Gas card, other future industry assignments). |

| | |
|---|---|
| 8 | ຮອງຮັບບັດຊຳລະຂອງຂະແໜງການສາທາລະນະສຸກ, ໂທລະຄົມມະນາຄົມແລະການສື່ສານ ແລະ ອຸດສາຫະກຳບັດຊຳລະອື່ນໆ (Healthcare, telecommunication cards and other future industry assignments). |
| 9 | ຮອງຮັບບັດຊຳລະຂອງບັນດາປະເທດຕ່າງໆ ເພື່ອປັບໃຊ້ຕາມລະບົບການຊຳລະພາຍໃນຂອງຕົນ (Reserved for use by national standards bodies). |